# ຂະບວນການຕັດ

"ຂະບວນການຕັດສິນ" ແມ່ນອີກວິທີໜຶ່ງໃນການເອີ້ນ ການທົບທວນຄືນ ຫຼື ການສືບສວນ. ເມື່ອພວກເຮົາຮູ້ຈັກບັນຫາທີ່ກໍ່ໃຫ້ເກີດຄຳຖາມວ່າ ບາງບຸກຄົນມີສິດໄດ້ຮັບສະຫວັດດີການຫຼືບໍ່, ພວກເຮົາຈຳເປັນຕ້ອງຂໍ ແລະ ທົບທວນຂໍ້ມູນເພີ່ມເຕີມຕາມກົດໝາຍ.

## ຂະບວນການຕັດສິນເລີ່ມຂຶ້ນເມື່ອໃດ?

ຫຼັງຈາກທ່ານສົ່ງຄຳຮ້ອງເພື່ອຮັບສະຫວັດດີການຈາກໂຄງການປະກັນການຫວ່າງງານເຖິງພວກເຮົາ, ພວກເຮົາຈະທົບທວນເພື່ອພິຈາລະນາສິດຂອງທ່ານ. ຂໍ້ຮຽກຮ້ອງຂອງທ່ານອາດຈະສະຫຼັບຊັບຊ້ອນ ຫຼື ມີບັນຫາທີ່ຮຽກຮ້ອງໃຫ້ພວກເຮົາດຳເນີນການທົບທວນຄືນໃຫ້ລະອຽດ. ອັນນີ້ເອີ້ນວ່າ ຂະບວນການຕັດສິນ.

ໃນລະຫວ່າງຂະບວນການຕັດສິນ, ພວກເຮົາຈະຮວບຮວມຂໍ້ມູນຈາກທ່ານ ແລະ ແຫຼ່ງຂໍ້ມູນອື່ນໆຕາມຈຳເປັນ. ຕົວຢ່າງ: ຖ້າບັນຫາກ່ຽວຂ້ອງກັບການຈັດຫາງານຂອງທ່ານເມື່ອບໍ່ດົນມານີ້, ໂດຍທົ່ວໄປ ພວກເຮົາຈະຮວບຮວມຂໍ້ມູນຈາກນາຍຈ້າງເກົ່າຂອງທ່ານເຊັ່ນກັນ. ຈາກນັ້ນພວກເຮົາຈະທົບທວນກວດສອບເບິ່ງຂໍ້ມູນທີ່ມີ, ນຳເອົາກົດໝາຍ ແລະ ກົດລະບຽບສຳລັບປະກັນການຫວ່າງງານ ໄປໃຊ້ກັບສະຖານະການຂອງທ່ານ ແລະ ທຳການຕັດສິນ.

## ເປັນຫຍັງຄຳຮ້ອງຂອງຂ້າພະເຈົ້າຈຶ່ງໄດ້ຮັບການກວດສອບ?

ໂຄງການປະກັນການຈັດຫາງານໃຫ້ສະຫວັດດີການແກ່ຄົນຜູ້ທີ່ບໍ່ມີວຽກເຮັດງານທຳ ຫຼື ຖືກຫຼຸດຊົ່ວໂມງເຮັດວຽກຫຼຸດລົງ ໂດຍທີ່ບໍ່ແມ່ນຄວາມຜິດຂອງຕົນເອງ. ຜູ້ຄົນຈະຕ້ອງພ້ອມເຂົ້າເຮັດວຽກ, ສາມາດເຮັດວຽກໄດ້ ແລະ ຕັ້ງໜ້າຊອກວຽກທຸກໆອາທິດເພື່ອຮັບສະຫວັດດີການ. ຖ້າພວກເຮົາຮູ້ວ່າທ່ານອາດບໍ່ປະຕິບັດຕາມເງື່ອນໄຂຂໍ້ກຳນົດເຫຼົ່ານີ້, ພວກເຮົາຕ້ອງສືບສວນບັນຫາ ແລະ ຈະຕັດສິນວ່າທ່ານມີສິດຮັບສະຫວັດດີການຫຼືບໍ່.

ທ່ານສາມາດຊອກຫາລາຍການເຫດຜົນທົ່ວໄປສຳລັບການທົບທວນຄືນໄດ້ໃນ
unemployment.oregon.gov/adjudication.

State of Oregon
Employment Department

# ຂະບວນການຕັດ

## ການກວດສອບນີ້ໃຊ້ເວລາດົນປານໃດ?

ພວກເຮົາກວດສອບຄຳຮ້ອງຕາມລຳດັບກ່ອນຫຼັງທີ່ພວກເຮົາໄດ້ຮັບເອກະສານ, ແຕ່ສຳລັບບັນຫາສະຫຼັບຊັບຊ້ອນອາດໃຊ້ເວລາດົນກວ່າເພື່ອກວດສອບ. ພວກຈຳເປັນຕ້ອງໃຊ້ເວລາໂອ້ລົມກັບພາກສ່ວນກ່ຽວຂ້ອງທັງໝົດ, ເກັບກຳຂໍ້ເທັດຈິງ, ນຳໃຊ້ກົດໝາຍ ແລະ ທຳການຕັດສິນທີ່ເປັນທຳກ່ຽວກັບຈະອະນຸຍາດໃຫ້ມີການປະຕິເສດສະຫວັດດີການຫຼືບໍ່.

ພວກເຮົາຮູ້ວ່າອາດເປັນເລື່ອງຍາກທີ່ຈະລໍຖ້າຮັບສະຫວັດດີການ ໃນຂະນະທີ່ພວກເຮົາດຳເນີນການກວດສອບຂອງພວກເຮົາ. ການດຳເນີນການກວດສອບ ແລະ ການເກັບກຳຂໍ້ເທັດຈິງທັງໝົດ ຈະຊ່ວຍໃຫ້ພວກເຮົາປົກປ້ອງອີງການຈາກການສໍ້ໂກງ ແລະ ຈາກຄວາມເຄັ່ງຕຶງຂອງການຈ່າຍເງິນຫຼາຍເກີນຄວນ. ການຈ່າຍເງິນຫຼາຍເກີນຄວນເກີດຂຶ້ນເມື່ອທ່ານຮັບຜົນປະໂຫຍດທີ່ທ່ານບໍ່ມີສິດຮັບ ແລະ ທ່ານຕ້ອງຈ່າຍເງິນຄືນ.

## ທ່ານຈະຕິດຕໍ່ຂ້າພະເຈົ້າແນວໃດ?

ຖ້າຄຳຮ້ອງຂອງທ່ານຈຳເປັນໃຫ້ມີການດຳເນີນກວດສອບ, ຜູ້ກວດສອບ - ຜູ້ສືບສວນຄຳຮ້ອງຂອງທ່ານ - ຈະຕິດຕໍ່ຫາທ່ານ ຜ່ານທາງໂທລະສັບ, ໄປສະນີ ແລະ ອີເມວ. ພວກເຮົາຈະບໍ່ສົ່ງຂໍ້ຄວາມຫາທ່ານ. ຖ້າທ່ານມີໂທລະສັບ, ກະລຸນາຮັບໂທລະສັບ, ເຖິງວ່າຈະເປັນເບີບໍ່ຮູ້ກໍ່ຕາມ ແລະ ໃຫ້ແນ່ໃຈວ່າໄດ້ຕັ້ງຂໍ້ຄວາມສຽງໄວ້ ເພື່ອໃຫ້ຜູ້ໂທຈາກພະແນກຈັດຫາງານຂອງລັດໂອເຣກອນສາມາດຝາກຂໍ້ຄວາມສຽງໄວ້ໄດ້.

ກະລຸນາຕອບຈົດໝາຍ ແລະ ຂໍ້ຄວາມສຽງທັງໝົດ ຈາກພະແນກຈັດຫາງານຂອງລັດໂອເຣກອນ. ຖ້າທ່ານບໍ່ແນ່ໃຈວ່າແມ່ນການສື່ສານມາຈາກພວກເຮົາແທ້ຫຼືບໍ່ ຫຼື ຖ້າທ່ານກັງວົນວ່າການສື່ສານບາງອັນອາດຈະເປັນການຫຼອກລວງ, ກະລຸນາຕິດຕໍ່ພວກເຮົາເພື່ອຂໍຄວາມຊ່ວຍເຫຼືອ.

ຢ່າລືມອັບເດດທີ່ຢູ່ຂອງທ່ານໃນ Frances Online ຢູ່ frances.oregon.gov.

# ຂະບວນການຕັດ

## ຂ້າພະເຈົ້າຄວນເຮັດແນວໃດຕອນນີ້ ແລະ ຂ້າພະເຈົ້າສາມາດເລັ່ງການກວດສອບໄດ້ແນວໃດ?

1. ສືບຕໍ່ຍື່ນຄໍາຮ້ອງທຸກໆອາທິດໃນລະຫວ່າງການກວດສອບ ເພື່ອທີ່ທ່ານຈະສາມາດໄດ້ຮັບຄວາມໜ້າເຊື່ອຖືສໍາລັບອາທິດຂອງທ່ານ. ຖ້າພວກເຮົາຕັດສິນວ່າທ່ານມີສິດຮັບການຈ່າຍສະຫວັດດີການ, ທ່ານສາມາດຮັບເງິນໄດ້ສະເພາະອາທິດທີ່ທ່ານຍື່ນຄໍາຮ້ອງຕົງຕາມເວລາເທົ່ານັ້ນ. ທ່ານບໍ່ສາມາດກັບໄປ ແລະ ຍື່ນຄໍາຮ້ອງເອົາຄືນຫຼັງໄດ້.

2. ກະລຸນາຕອບຈົດໝາຍທຸກສະບັບທີ່ພວກເຮົາສົ່ງໃຫ້ທ່ານ. ທ່ານອາດສົ່ງຈົດໝາຍກັບຄືນໂດຍທາງໄປສະນີ ຫຼື ໃຊ້ແບບ ຕິດຕໍ່ພວກເຮົາ ກໍ່ໄດ້. ຂໍ້ມູນທີ່ພວກເຮົາຂໍມີຄວາມແຕກຕ່າງກັນໄປ. ຕົວຢ່າງ: ພວກເຮົາອາດຈະຂໍໃຫ້ທ່ານ:

   - ຊີ້ແຈງຂໍ້ມູນນາຍຈ້າງຂອງທ່ານ
   - ລາຍງານການຊອກວຽກປະຈໍາອາທິດຂອງທ່ານ
   - ອະທິບາຍວ່າເປັນຫຍັງທ່ານຈຶ່ງອອກຈາກວຽກ, ຖືກໄລ່ອອກ ຫຼື ປະຕິເສດວຽກໃໝ່ໃນຂະນະທີ່ຍື່ນຄໍາຮ້ອງຮັບສະຫວັດດີການ
   - ໃຫ້ຂໍ້ມູນ ຖ້າທ່ານບໍ່ພ້ອມ ຫຼື ບໍ່ສາມາດເຮັດວຽກໄດ້ ໃນຂະນະທີ່ຍື່ນຄໍາຮ້ອງເອົາສະຫວັດດີການ
   - ອັບເດດຂໍ້ມູນຕິດຕໍ່ຂອງທ່ານ

3. ຖ້າທ່ານມີໂທລະສັບ, ໃຫ້ແນ່ໃຈວ່າໄດ້ຕັ້ງຂໍ້ຄວາມສຽງໄວ້ ເພື່ອໃຫ້ຜູ້ໂທຈາກພະແນກຈັດຫາງານຂອງລັດໂອເຣກອນສາມາດຝາກຂໍ້ຄວາມສຽງໄວ້ໄດ້.

4. ກະລຸນາຕອບຈົດໝາຍ ແລະ ຂໍ້ຄວາມສຽງທັງໝົດ ຈາກພະແນກຈັດຫາງານລັດໂອເຣກອນ. ຖ້າທ່ານບໍ່ແນ່ໃຈວ່າແມ່ນການສື່ສານມາຈາກພວກເຮົາຫຼືບໍ່ ຫຼື ຖ້າທ່ານກັງວົນວ່າການສື່ສານບາງອັນອາດຈະເປັນການຫຼອກລວງ, ກະລຸນາຕິດຕໍ່ພວກເຮົາເພື່ອຂໍຄວາມຊ່ວຍເຫຼືອ. ວິທີງ່າຍທີ່ສຸດ ແລະ ໄວທີ່ສຸດທີ່ຈະສົ່ງຂໍ້ມູນໃຫ້ພວກເຮົາແມ່ນຜ່ານແບບຟອມ ຕິດຕໍ່ພວກເຮົາ ທີ່ unemployment.oregon.gov/contact.

State of Oregon
Employment Department

# ຂະບວນການຕັດ

## ຈະເຮັດແນວໃດ ຖ້າຂ້າພະເຈົ້າບໍ່ເຫັນດີກັບຄຳຕັດສິນ?

ໃນຕອນທ້າຍຂອງການກວດສອບຂອງພວກເຮົາ, ພວກເຮົາຈະຕັດສິນວ່າທ່ານມີສິດຮັບສະຫວັດດີການຫຼືບໍ່. ພວກເຮົາຈະສົ່ງຄຳຕັດສິນໃຫ້ທ່ານດ້ວຍວິທີທາງໃດໜຶ່ງ. ຖ້າທ່ານບໍ່ເຫັນດີກັບຄຳຕັດສິນ, ທ່ານມີສິດຍື່ນອຸທອນ ແລະ ຂໍ ໃຫ້ຜູ້ພິພາກສາກົດໝາຍປົກຄອງພິຈາລະນາຄະດີໄດ້. ນາຍຈ້າງຂອງທ່ານມີສິດຍື່ນອຸທອນຄຳຕັດສິນທີ່ພວກເຮົາໄດ້ຕັດສິນຄຳຮ້ອງຂອງທ່ານໄປແລ້ວເຊັ່ນກັນ. ຖ້າທ່ານຕັດສິນໃຈຍື່ນອຸທອນ, ສືບຕໍ່ຍື່ນຄຳຮ້ອງຮັບສະຫວັດດີການ ໃນຂະນະທີ່ລໍຖ້າຜົນຂອງການພິຈາລະນາຄະດີ.

ພວກເຮົາຈະສົ່ງຄຳຕັດສິນໃຫ້ທ່ານ ແລະ ຈະມີຄຳແນະນຳກ່ຽວກັບວິທີຍື່ນອຸທອນໃຫ້. ທ່ານສາມາດຮຽນຮູ້ເພີ່ມເຕີມໄດ້ທີ່ unemployment.oregon.gov/appeals.

# ຂະບວນການຕັດ

## ຈະເຮັດແນວໃດ ຖ້າຂ້າພະເຈົ້າຕ້ອງການຄວາມຊ່ວຍເຫຼືອດຽວນີ້?

ການກວດສອບຈະໃຊ້ເວລາ ແລະ ພວກເຮົາເຂົ້າໃຈວ່າ ທ່ານອາດຕ້ອງການຄວາມຊ່ວຍເຫຼືອດຽວນີ້. ນີ້ແມ່ນແຫຼ່ງຂໍ້ມູນບາງຢ່າງເຊັ່ນ: ການຄຸ້ມຄອງສຸຂະພາບ ແລະ ລິ້ງໄປຫາການຊ່ວຍເຫຼືອອື່ນໆພາຍໃນຊຸມຊົນຂອງທ່ານ.

### WorkSource Oregon (ແຫຼ່ງຂໍ້ມູນການຈ້າງງານ ລັດໂອເຣກອນ)

ຫ້ອງການ WorkSource Oregon (ແຫຼ່ງຂໍ້ມູນການຈ້າງງານ ລັດໂອເຣກອນ) ເຊື່ອມຕໍ່ຜູ້ເຮັດກັບແຫຼ່ງຂໍ້ມູນ ເພື່ອສ້າງອາຊີບອັນໂດດເດັ່ນ. ປະຊາຊົນສາມາດເຂົ້າຮຽນ, ຮັບຄວາມຊ່ວຍເຫຼືອດ້ານຂຽນປະຫວັດການເຮັດວຽກ, ຄົ້ນຫາການແນະນໍາວຽກ ແລະ ອື່ນໆໄດ້ຕາມສະຖານທີ່ຕ່າງໆທົ່ວລັດ ຫຼື ທາງອອນລາຍ!
ຂໍ້ມູນເພີ່ມເຕີມກ່ຽວກັບການບໍລິການ ແລະ ສະຖານທີ່ແມ່ນມີໃຫ້ຢູ່ທີ່ worksourceoregon.org.

### ການຄຸ້ມຄອງສຸຂະພາບ

ຖ້າທ່ານສູນເສຍການຄຸ້ມຄອງສຸຂະພາບ ຫຼື ບໍ່ມີການຄຸ້ມຄອງສຸຂະພາບ, ທ່ານອາດຈະມີເງື່ອນໄຂໄດ້ຮັບແຜນປະກັນສຸຂະພາບບໍ່ເສຍຄ່າ ຫຼື ລາຄາຖືກ. ເຂົ້າເບິ່ງທີ່ healthcare.oregon.gov ຫຼື ໂທຫາເບີ 1-855-268-3767.

### 211info

211info ສາມາດຊ່ວຍທ່ານຊອກແຫຼ່ງການຊ່ວຍເຫຼືອອື່ນໆທີ່ມີໃຫ້ຢູ່ໃນລັດໂອເຣກອນ ຫຼື ຢູ່ໃນຊຸມຊົນທ້ອງຖິ່ນຂອງທ່ານເຊັ່ນ: ຊ່ວຍໃນການຈ່າຍຄ່າເຊົ່າ, ຈ່າຍຄ່ານ້ຳຄ່າໄຟຟ້າ ແລະ ການເຂົ້າເຖິງສະຫວັດດີການອື່ນໆ.

ເຂົ້າເບິ່ງ 211info.org ເພື່ອຮຽນຮູ້ເພີ່ມເຕີມ ແລະ ເພື່ອຊອກຫາແຫຼ່ງການຊ່ວຍເຫຼືອ.

ທ່ານຍັງສາມາດ: ໂທຫາ 2-1-1 ຫຼື 1-866-698-6155 (ມີຜູ້ແປພາສາບໍ່ເສຍຄ່າ) TTY

ກົດ 711 ແລະ ໂທຫາ 1-866-698-6155

ສົ່ງລະຫັດໄປສະນີ ZIP Code ຂອງທ່ານໄປທີ່ເບີ 898211 (TXT211) (ພາສາ

ອັງກິດ ແລະ ພາສາສະເປນ) ອີເມວ help@211info.org (ພາສາອັງກິດ ແລະ ພາ

ສາສະເປນ)